United States Department of State

*Washington, D.C. 20520*

On behalf of the Department of State, I am pleased to welcome you and your family to the United States and hope that your expectations for your new life will be realized.

As you may be aware, the funds to cover the cost of your transportation were provided to the International Organization for Migration (IOM) by the Department of State's Bureau for Refugee Programs. The Promissory Note that you signed prior to departure confirmed your agreement to make regular monthly payments to your sponsoring agency - the United States Catholic Conference (USCC). These payments will be used to reimburse the United States Government for the funds it provided to IOM for your transportation. The accompanying Travel Loan Information Kit was prepared by USCC to explain the loan program and to describe the procedures for making your regular monthly payments. Please review this information very carefully and ask your resettlement agency to explain any parts of the kit that you do not fully understand.

In this time of great demand on U.S. Government resources to meet increased needs of refugees both overseas and within the United States, I urge you to undertake as soon as possible the repayment of your loan. Your prompt action in meeting your financial obligation by making regular payments to USCC will enable the Government to continue its financial assistance for the admission of refugees.

We firmly believe that an effort by all refugees to meet their legal obligation to repay their IOM transportation loan will ensure that other deserving refugees throughout the world will be provided an opportunity, as you have been, to work for a fuller and more enjoyable life. Won't you join us in this effort and do your part by repaying your loan? Please follow the instructions in the kit and submit your payments to USCC in accordance with your promise.

Sincerely,

Norman W. Runkles
Comptroller
Bureau for Refugee Programs

United States Department of State

*Washington, D.C. 20520*

ໃນນາມກະຊວງການຕ່າງປະເທດສະຫະຣັຖອະເມຣິກາ ຂ້າພະເຈົ້າມີຄວາມຍິນດີຕ້ອນຮັບທ່ານແລະຄອບຄົວຂອງທ່ານເຂົ້າມາຍັງສະຫະຣັຖ ພ້ອມທັງຫວັງວ່າຄວາມຕັ້ງໃຈຂອງທ່ານໃນການສ້າງຊີວິດໃຫມ່ນັ້ນຈະບັນລຸຜົນສຳເຣັດ.

ດັ່ງທີ່ທ່ານອາດຮູ້ຈັກຢູ່ແລ້ວວ່າ ເງິນທີ່ໃຊ້ຈ່າຍຄ່າເດີນທາງຂອງພວກທ່ານນັ້ນແມ່ນພແນກກຳກັບໂຄງການຊ່ວຍເຫຼືອອົບພະຍົບຂອງກະຊວງຕ່າງປະເທດສະຫະຣັຖເປັນຜູ້ອະນຸມັດໃຫ້ແກ່ອົງການ International Organization for Migration (IOM). ຫນັງສືສັນຍາທີ່ທ່ານເຊັນຊື່ໃສ່ກ່ອນອອກເດີນທາງນັ້ນເປັນການຢືນຢັນເຖິງຄວາມເຫັນດີຂອງທ່ານທີ່ຈະຈ່າຍຄ່າເດີນທາງຂອງທ່ານຄືນໃຫ້ແກ່ອົງການ United States Catholic Conference (USCC) ທີ່ເປັນຜູ້ອຸປະຖັມທ່ານເປັນປະຈຳທຸກໆເດືອນ. ເງິນທີ່ທ່ານຈ່າຍໃຫ້ແກ່ອົງການ USCC ນັ້ນຈະໄດ້ມອບຄືນໃຫ້ແກ່ກະຊວງການຕ່າງປະເທດສະຫະຣັຖ ທີ່ໄດ້ອະນຸມັດທຶນໃຫ້ແກ່ອົງການ IOM ສຳຫຼັບຈ່າຍຄ່າເດີນທາງລ່ວງຫນ້າແກ່ທ່ານ. ເອກະສານກ່ຽວກັບເງິນກູ້ຢືມສຳຫຼັບການເດີນທາງທີ່ຕິດມາພ້ອມນີ້ ແມ່ນອົງການ USCC ເປັນຜູ້ຈັດສົ່ງມາ ເພື່ອອະທິບາຍກ່ຽວກັບໂຄງການເງິນກູ້ຢືມແລະກ່ຽວກັບວິທີຈ່າຍເງິນໃຫ້ແກ່ອົງການ USCC ເປັນປະຈຳທຸກເດືອນ, ກະຣຸນາອ່ານທົບທວນເບິ່ງເອກະສານດັ່ງກ່າວໃຫ້ລະອຽດຖີ່ຖ້ວນ ແລະຂໍໃຫ້ອົງການທີ່ເປັນຜູ້ອຸປະຖັມຂອງທ່ານອະທິບາຍສ່ວນທີ່ທ່ານບໍ່ເຂົ້າໃຈສັກນັ້ນໃຫ້ທ່ານຮູ້.

ເວລານີ້ການຂໍເອົາທຶນຈາກຣັຖະບານສະຫະຣັຖແມ່ນມີຫຼາຍທີ່ສຸດສຳຫຼັບຊ່ວຍເຫຼືອຊາວອົບພະຍົບທັງຢູ່ໃນຕ່າງປະເທດ ແລະຢູ່ພາຍໃນສະຫະຣັຖ ສະນັ້ນຂ້າພະເຈົ້າຈຶ່ງຂໍຮ້ອງໃຫ້ທ່ານຈົ່ງໄດ້ເລີ້ມລົງມືຈ່າຍເງິນຄ່າເດີນທາງຂອງທ່ານໃຫ້ໄວເທົ່າທີ່ຈະໄວໄດ້. ການເລີ້ມລົງມືຈ່າຍໂດຍໄວແລະເປັນປະຈຳນັ້ນຈະພາໃຫ້ຣັຖະບານສາມາດໃຫ້ການຊ່ວຍເຫຼືອດ້ານການເງິນເພື່ອຮັບເອົາຊາວອົບພະຍົບຕໍ່ໄປໄດ້.

ພວກເຮົາເຊື່ອວ່າຄວາມພະຍາຍາມຂອງຊາວອົບພະຍົບທັງຫມົດ ໃນການປະຕິບັດຫນ້າທີ່ດ້ານກົດຫມາຍຂອງພວກຕົນຊຶ່ງໄດ້ແກ່ການຈ່າຍທົດແທນຄ່າເດີນທາງທີ່ອົງການ IOM ຈ່າຍລ່ວງຫນ້າໃຫ້ນັ້ນ ຈະພາໃຫ້ຊາວອົບພະຍົບພວກອື່ນໃນທົ່ວໂລກມີໂອກາດດັ່ງດຽວກັນກັບພວກທ່ານເພື່ອສ້າງ ຊີວິດໃຫ້ມີຄວາມລາບລື່ນລື້ນ. ທ່ານຈະທຳຄວາມພະຍາຍາມຮ່ວມກັບພວກເຮົາ ແລະຈະຈ່າຍເງິນຄ່າເດີນທາງລ່ວງຫນ້ານັ້ນຄືນຫຼືບໍ່? ກະຣຸນາປະຕິບັດຕາມຄຳແນະນຳໃນເອກະສານທີ່ສົ່ງມາພ້ອມນີ້ແລະຈ່າຍເງິນໃຫ້ແກ່ອົງການ USCC ຕາມສັນຍາຂອງທ່ານ.

ດ້ວຍຄວາມຮັກແພງ

ນໍມັນ ຣັງໂກນສ

ຜູ້ກອດກາບັນຊີ

ພແນກກຳກັບໂຄງການຊ່ວຍເຫຼືອອົບພະຍົບ

Lao/English